ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






# Capacity development workshops on Continuing Professional Development in target Teacher Training Colleges

## Media Report
## (27 October - 10 November 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ ແລະ ອົງການ USAID
Basic Education Quality and Access in Lao PDR is managed by Tetra Tech International Development,
on behalf of the Australian Government and the United States Agency for International Development (USAID).

# Capacity development workshops on Continuing Professional Development in target Teacher Training Colleges

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-10-30 | Newspaper | Economic and Commerce Newspaper | Front and page 4 |
| 2023-10-30 | Newspaper | Pathet Lao | Page 2 |
| 2023-11-01 | Newspaper | Pasaxon Newspaper | Page 4 |
| 2023-11-02 | Newspaper | Army Newspaper | Page 3 |
| 2023-11-06 | Newspaper | Vientiane Mai | Page 2 |
| 2023-10-27 | Social Media | Pathedlao Facebook | 376K Followers |
| 2023-10-26 | Social Media | Edu-Sport TV online Facebook | 65K Followers |
| 2023-10-28 | Social Media | Edu-Sport Daily News Facebook | 7.2K Followers |
| 2023-10-29 | Social Media | Economic and Commerce Facebook | 513K Followers |
| 2023-10-30 | Social Media | Vientiane Mai Facebook | 60K Followers |
| 2023-10-30 | Social Media | Pasaxon Facebook | 23K Followers |
| 2023-11-10 | Social Media | Tetra Tech International Development Facebook | 34K Followers |
| 2023-11-10 | Social Media | Tetra Tech International Development LinkedIn | 58K Followers |
| 2023-10-27 | Website | KPL English Website | Read article here |
| 2023-10-27 | Website | Economic and Commerce Website | Read article here |
| 2023-10-28 | Website | Edu-Sport Daily News Website | Read article here |
| 2023-11-01 | Website | BEQUAL Website | Read article here |
| 2023-11-10 | Website | Tetra Tech International Development Website | |
| 2023-10-27 | Radio | Army Radio FM 99.7 | |
| 2023-10-27 | Radio | Public Security Radio FM 101.5 | |
| 2023-10-27 | Radio | Vientiane Radio FM 105.5 | |
| 2023-10-27 | Radio | Lao National Radio FM 103.7 | |
| 2023-10-28 | Radio | Education Radio FM 103.7 MHZ | |
| 2023-11-06 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 660 members |
| 2023-11-06 | WhatsApp | PESS-DESB | 18 Provincial groups 452 members |
| 2023-11-06 | WhatsApp | ETSP | 3 groups with ethnic teachers 98 members |

| | | | |
|---|---|---|---|
| 2023-11-06 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-11-06 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2023-11-06 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

# Pictures of articles in the media

| 2023-10-30 | Newspaper | Economic and Commerce | Front and page 4 |
|---|---|---|---|

## ຝຶກອົບຮົມທັກສະ ການໃຫ້ຄຳປຶກສາ ແກ່ 3 ວິທະຍາໄລເປົ້າໝາຍ

ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID ຈັດກອງປະຊຸມວຽກການພັດທະນາຂີດຄວາມສາມາດ ຊຸດໃໝ່ ກ່ຽວກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

→ ອ່ານຕໍ່ໜ້າ A4



### ຝຶກອົບຮົມ ...

(ຕໍ່ຈາກໜ້າ 1)

ໃຫ້ພະນັກງານວິຊາການຫຼາຍກວ່າ 150 ຄົນ ໃນ 3 ວິທະຍາໄລຄູເປົ້າໝາຍ ໄດ້ຮັບການຝຶກອົບຮົມດ້ານທັກສະການໃຫ້ຄຳປຶກສາ.

ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນໃນວັນທີ 25 ກັນຍາ 2023 ທີ່ຜ່ານມາ ເຊິ່ງໄດ້ຈັດຂຶ້ນພ້ອມກັນທີ່ວິທະຍາໄລຄູຄັງໄຂ ແລະ ວິທະຍາໄລຄູສະຫວັນນະເຂດ ໃນອາທິດຖັດມາແມ່ນຈັດຂຶ້ນທີ່ວິທະຍາໄລຄູຫຼວງນ້ຳທາ ການຝຶກອົບຮົມແມ່ນສ່ວນໜຶ່ງຂອງກິດຈະກຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບທີມງານວິຊາການໃນ 3 ວິທະຍາໄລຄູເປົ້າໝາຍ ທີ່ຈັດໂດຍກົມການສ້າງຄູ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ.

ໄດ້ເຂົ້າຮ່ວມການຝຶກອົບຮົມຈຳນວນໜຶ່ງ ເພື່ອກະກຽມໃຫ້ເຂົາເຈົ້າມີຄວາມພ້ອມຕໍ່ພາລະບົດບາດໃນການຊ່ວຍເຫຼືອຄູ.

ຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ເລີ່ມໃຫ້ການສະໜັບສະໜູນຄູ ໃນຕອນເລີ່ມຕົ້ນຂອງສົກຮຽນໃໝ່ ໂດຍມີເປົ້າໝາຍໃນການປັບປຸງຄຸນນະພາບການສອນໃນໂຮງຮຽນຊັ້ນປະຖົມ. ພາລະບົດບາດຂອງ 3 ວິທະຍາໄລຄູເປົ້າໝາຍ (ສະຫວັນນະເຂດ, ຄັງໄຂ ແລະ ຫຼວງນ້ຳທາ) ແມ່ນການພັດທະນາ ຄວາມສາມາດດ້ານວິຊາການຂອງທີມຜູ້ເຮັດວຽກສຶກສານິເທດພາຍໃນ. ວິທະຍາໄລຄູຈະກາຍເປັນສູນກາງທີ່ດີທີ່ສຸດສຳລັບການພັດທະນາວິຊາຊີບຄູ, ສຳລັບນັກສຶກສາຄູ (ຜູ້ທີ່ຈະເປັນຄູໃນອະນາຄົດ ທີ່ກຳລັງໄດ້ຮັບການຝຶກອົບຮົມ) ແລະ ຄູສອນໃນໂຮງຮຽນ (ຄູໃນປັດຈຸບັນ). ເປົ້າໝາຍສູງສຸດແມ່ນເພື່ອໃຫ້ຄູສາມາດມີສ່ວນຮ່ວມກັບນັກຮຽນຂອງເຂົາເຈົ້າໃນການຮຽນຮູ້ ເພື່ອໃຫ້ບັນລຸຜົນການຮຽນທີ່ດີຂຶ້ນ.

ໃຫ້ທີມງານດ້ານວິຊາການຂອງວິທະຍາໄລຄູເປົ້າໝາຍເອົາໃຈໃສ່ຝຶກຝົນບົດບາດຂອງເຂົາເຈົ້າທີ່ເປັນຜູ້ຊີ້ນຳຜູ້ເຮັດວຽກສຶກສານິເທດພາຍໃນ ເຊິ່ງໄດ້ກະກຽມຄວາມພ້ອມໃຫ້ເຂົາເຈົ້າໃນການຊ່ວຍເຫຼືອແບບເຊິ່ງໜ້າ ແລະ ການຊ່ວຍເຫຼືອແບບທາງໄກແກ່ຜູ້ເຮັດວຽກສຶກສານິເທດພາຍໃນ, ການຝຶກອົບຮົມແມ່ນຝຶກໃຫ້ໂດຍທີມຜູ້ຊ່ຽວຊານວຽກງານຝຶກອົບຮົມຄູຂອງແຜນງານບີຄວາ.

ທ່ານ ອາຈານ ບົວສອນ ແສງມະນີ ທີມງານວິຊາການຂອງວິທະຍາໄລຄູຫຼວງນ້ຳທາ ໄດ້ກ່າວວ່າ "ການຝຶກອົບຮົມຄັ້ງນີ້ມີຄວາມສຳຄັນ ແລະ ເປັນປະໂຫຍດຫຼາຍສຳລັບທີມງານວິຊາການຂອງວິທະຍາໄລຄູ, ຄວາມຮູ້ ແລະ ຄວາມເຂົ້າໃຈທີ່ພວກເຮົາໄດ້ຮັບຄັ້ງນີ້ ແມ່ນເປັນປະໂຫຍດສຳລັບພະນັກງານ ເພື່ອໃຫ້ການຊ່ວຍເຫຼືອດ້ານເຕັກນິກວິຊາການແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ຈະໃຫ້ການຊ່ວຍເຫຼືອຄູ ເພື່ອປັບປຸງການສອນບົດຮຽນຂອງພວກເຂົາ ໂດຍນຳໃຊ້ຫຼັກສູດສະບັບປັບປຸງໃໝ່".

ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໄດ້ສ້າງຕັ້ງຂຶ້ນ ໂດຍການສະໜັບສະໜູນຜ່ານແຜນງານບີຄວາ ເພື່ອຮັບປະກັນການສະໜັບສະໜູນວຽກງານ CPD ຢູ່ໃນໂຮງຮຽນ ແລະ ແທດເໝາະກັບຄວາມຕ້ອງການຂອງຄູໃນ 7 ແຂວງເປົ້າໝາຍ (ຫຼວງນ້ຳທາ, ຜົ້ງສາລີ, ບໍ່ແກ້ວ, ຊຽງຂວາງ, ທ່າພັນ, ສະຫວັນນະເຂດ ແລະ ຄຳມ່ວນ). ລະບົບ CPD ໃນຂັ້ນໂຮງຮຽນນີ້, ວິທະຍາໄລຄູຈະເຮັດວຽກຢ່າງໃກ້ຊິດກັບພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະໜັບສະໜູນຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ຄູສອນໃນໂຮງຮຽນ. ທີມງານຜູ້ເຮັດວຽກສຶກສານິເທດພາຍໃນກວ່າ 1.000 ຄົນ ໃນ 30 ເມືອງເປົ້າໝາຍ

ທ່ານ ເກດ ພັນລັກ ທິວໜ້າ ກົມສ້າງຄູກະຊວງສຶກສາທິການ ແລະ ກິລາ ກ່າວວ່າ: "ວິທະຍາໄລຄູ ຈະນຳພາການເສີມສ້າງຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອຊ່ວຍເຫຼືອຄູຊັ້ນປະຖົມສຶກສາ ໃຫ້ມີຄຸນນະພາບສູງ. ລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ໄດ້ສະໜັບສະໜູນການຈັດຝຶກອົບຮົມທີ່ຕ້ອງການ ໂດຍທີມງານວິຊາການຈາກວິທະຍາໄລຄູ ເພື່ອປະຕິບັດພາລະບົດບາດທີ່ສຳຄັນນີ້".

ການຝຶກອົບຮົມໃນປັດຈຸບັນ ໄດ້ຖືກອອກແບບເພື່ອ

ການຝຶກອົບຮົມແຕ່ລະຄັ້ງມີຜູ້ເຂົ້າຮ່ວມຢ່າງໜ້ອຍ 50 ຄົນ ປະກອບມີ: ທີມງານວິຊາການຈາກວິທະຍາໄລຄູ; ຜູ້ສັງເກດການຈາກກົມສ້າງຄູ; ທີມງານຕິດຕາມ ແລະ ປະເມີນຜົນ; ທີມງານປະສານງານຈາກວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາແຂວງ. ໃນໄລຍະ 4 ມື້ຂອງການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ຄົ້ນຫາວິທີການທີ່ພາລະບົດບາດຂອງເຂົາເຈົ້າສາມາດສະໜັບສະໜູນນັກຮຽນໃນຂັ້ນທ້ອງຖິ່ນ ພາຍໃຕ້ຮູບແບບ CPD ໃໝ່ ຂອງກະຊວງສຶກສາທິການ ແລະ ກິລາ ສປປ ລາວ.

| 2023-10-30 | Newspaper | Pathed Lao | Page 2 |
|---|---|---|---|



ສ້າງຂີດຄວາມສາມາດ ດ້ານທັກສະ ການໃຫ້ຄຳປຶກສາ ແກ່ພະນັກງານຄູ

| 2023-11-01 | Newspaper | Pasaxon | Page 4 |
|---|---|---|---|

## ສສກ ພັດທະນາຂີດຄວາມສາມາດການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຈັດກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ທີມງານວິຊາການ 3 ວິທະຍາໄລ (ວລ) ຄູເປົ້າໝາຍ ທາງດ້ານທັກສະໃນການໃຫ້ຄໍາປຶກສາ ຂຶ້ນພ້ອມກັນເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນໍ້າທາ ເຂົ້າຮ່ວມ.

ການຝຶກອົບຮົມ ແມ່ນສ່ວນໜຶ່ງຂອງກິດຈະກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງສໍາລັບທີມງານວິຊາການໃນ 3 ວິທະຍາໄລຄູເປົ້າໝາຍ ທີ່ຈັດໂດຍກົມການສ້າງຄູກະຊວງສຶກສາທິການ ແລະ ກິລາ ແລະ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົສຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ. ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໄດ້ສ້າງຕັ້ງຂຶ້ນ ໂດຍການສະໜັບສະໜູນຜ່ານແຜນງານບີຄວາ ເພື່ອຮັບປະກັນການສະໜັບສະໜູນວຽກງານ CPD ຢູ່ໃນໂຮງຮຽນ ແລະ ແທດເໝາະກັບຄວາມຕ້ອງການຂອງຄູໃນ 7 ແຂວງເປົ້າໝາຍ (ຫຼວງນໍ້າທາ, ຜົ້ງສາລີ, ບໍ່ແກ້ວ, ຊຽງຂວາງ, ທົ່ວພັນ, ສະຫວັນນະເຂດ ແລະ ຄໍາມ່ວນ).

ທ່ານ ເກດ ພັນລັກ ຫົວໜ້າກົມສ້າງຄູ ກະຊວງ ສຶກສາທິການ ແລະ ກິລາ ໄດ້ກ່າວວ່າ : ວິທະຍາໄລຄູ ຈະນໍາພາການເສີມສ້າງຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອຊ່ວຍເຫຼືອຄູຊັ້ນປະຖົມສຶກສາໃຫ້ມີຄຸນນະພາບສູງ. ລັດຖະບານອົສຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ ໄດ້ສະໜັບສະໜູນການຈັດຝຶກອົບຮົມທີ່ຕ້ອງການ ໂດຍທີມງານວິຊາການຈາກວິທະຍາໄລຄູ ເພື່ອປະຕິບັດພາລະບົດບາດທີ່ສໍາຄັນນີ້.



ການຝຶກອົບຮົມແມ່ນຝຶກໃຫ້ໂດຍທີມຜູ້ຊ່ຽວຊານວຽກງານຝຶກອົບຮົມຄູຂອງແຜນງານບີຄວາ.

ທ່ານ ອາຈານ ບົວສອນ ແສງມະນີ ທີມງານວິຊາການຂອງວິທະຍາໄລຄູຫຼວງນໍ້າທາ ໄດ້ກ່າວວ່າ: ການຝຶກອົບຮົມຄັ້ງນີ້ມີຄວາມສໍາຄັນ ແລະ ເປັນປະໂຫຍດຫຼາຍສໍາລັບທີມງານວິຊາການຂອງວິທະຍາໄລຄູ. ຄວາມຮູ້ ແລະ ຄວາມເຂົ້າໃຈທີ່ພວກເຮົາໄດ້ຮັບຄັ້ງນີ້, ແມ່ນເປັນປະໂຫຍດສໍາລັບພະນັກງານ ເພື່ອໃຫ້ການຊ່ວຍເຫຼືອດ້ານເຕັກນິກວິຊາການ ແກ່ຜູ້ເຮັດວຽກສຶກສານິເທດພາຍໃນທີ່ຈະໃຫ້ການຊ່ວຍເຫຼືອຄູເພື່ອປັບປຸງການສອນບົດຮຽນຂອງພວກເຂົາ ໂດຍນໍາໃຊ້ຫຼັກສູດສະບັບປັບປຸງໃໝ່.

(ຂ່າວ: ແຜນງານບີຄວາ)

| 2023-11-02 | Newspaper | Army Newspaper | Page 3 |
|---|---|---|---|

## ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບການສະໜັບສະໜູນ ຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID



❖ ກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ທີມງານວິຊາການວິທະຍາໄລຄູທາງດ້ານທັກສະໃນການໃຫ້ຄໍາປຶກສາ ໄດ້ຈັດຂຶ້ນພ້ອມກັນທີ່ວິທະຍາໄລຄູຄັງໄຂ ແລະ ວິທະຍາໄລຄູສະຫວັນນະເຂດ ໃນວັນທີ 25 ກັນຍາ 2023, ໃນອາທິດຖັດມາແມ່ນຈັດຂຶ້ນຢູ່ທີ່ວິທະຍາໄລຄູຫຼວງນໍ້າທາ ໃນອາທິດທໍາອິດຂອງເດືອນຕຸລາ 2023. ການເຝິກອົບຮົມແມ່ນສ່ວນໜຶ່ງຂອງກິດຈະກໍາການພັດທະນາ ວິຊາຊີບ ຄູແບບຕໍ່ເນື່ອງ ສໍາລັບທີມງານວິຊາການໃນ 3 ວິທະຍາໄລຄູເປົ້າໝາຍທີ່ຈັດໂດຍກົມການສ້າງຄູ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID ໂດຍຜ່ານແຜນງານບີຄວາ.

ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD ໄດ້ສ້າງຕັ້ງຂຶ້ນ ໂດຍການສະໜັບສະໜູນຜ່ານແຜນງານບີຄວາ ເພື່ອຮັບປະກັນການສະໜັບສະໜູນວຽກງານ CPD ຢູ່ໃນໂຮງຮຽນ ແລະ ແທດເໝາະກັບຄວາມຕ້ອງການຂອງຄູໃນ 7 ແຂວງເປົ້າໝາຍ (ຫຼວງນໍ້າທາ, ຜົ້ງສາລີ, ບໍ່ແກ້ວ, ຊຽງຂວາງ, ຫົວພັນ, ສະຫວັນນະເຂດ ແລະ ຄໍາມ່ວນ). ລະບົບ CPD ໃນຂັ້ນໂຮງຮຽນນີ້, ວິທະຍາໄລຄູຈະເຮັດວຽກຢ່າງໃກ້ຊິດກັບພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະໜັບສະໜູນຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ຄູສອນໃນໂຮງຮຽນ. ທີມງານຜູ້ເຮັດວຽກສຶກສານິເທດພາຍໃນກວ່າ 1.000 ຄົນ, ໃນ 30 ເມືອງເປົ້າໝາຍໄດ້ເຂົ້າຮ່ວມການເຝິກອົບຮົມ ເພື່ອກະກຽມໃຫ້ມີຄວາມພ້ອມຕໍ່ພາລະບົດບາດໃນການຊ່ວຍເຫຼືອຄູ. ໂດຍມີເປົ້າໝາຍໃນການປັບປຸງຄຸນນະພາບການສອນໃນໂຮງຮຽນຊັ້ນປະຖົມ. ພາລະບົດບາດຂອງ 3 ວິທະຍາໄລຄູເປົ້າໝາຍ (ສະຫວັນນະເຂດ, ຄັງໄຂ ແລະ ຫຼວງນໍ້າທາ) ແມ່ນການພັດທະນາຄວາມສາມາດດ້ານວິຊາການຂອງທີມຜູ້ເຮັດວຽກສຶກສານິເທດພາຍໃນ. ວິທະຍາໄລຄູຈະກາຍເປັນສູນກາງທີ່ດີທີ່ສຸດສໍາລັບການພັດທະນາວິຊາຊີບຄູ, ສໍາລັບນັກສຶກສາຄູ (ຜູ້ທີ່ຈະເປັນຄູໃນອະນາຄົດທີ່ກໍາລັງໄດ້ຮັບການເຝິກອົບຮົມ) ແລະ ຄູສອນໃນໂຮງຮຽນ (ຄູໃນປັດຈຸບັນ). ເປົ້າໝາຍສູງສຸດເພື່ອໃຫ້ຄູສາມາດມີສ່ວນຮ່ວມກັບນັກຮຽນໃນການຮຽນຮູ້ເພື່ອໃຫ້ບັນລຸຜົນການຮຽນທີ່ດີຂຶ້ນ.

ທ່ານ ເກດ ພັນລັກ ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ "ວິທະຍາໄລຄູຈະນໍາພາການເສີມສ້າງຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດພາຍໃນເພື່ອຊ່ວຍເຫຼືອຄູຊັ້ນປະຖົມສຶກສາໃຫ້ມີຄຸນນະພາບສູງ. ການເຝິກອົບຮົມ ແມ່ນເຝິກໂດຍທີມຜູ້ຊ່ຽວຊານວຽກງານເຝິກອົບຮົມຄູຂອງແຜນງານບີຄວາ. ການເຝິກອົບຮົມແຕ່ລະຄັ້ງມີຜູ້ເຂົ້າຮ່ວມຢ່າງໜ້ອຍ 50 ຄົນ, ປະກອບມີ: ທີມງານວິຊາການຈາກວິທະຍາໄລຄູ; ຜູ້ສັງເກດການຈາກກົມສ້າງຄູ; ທີມງານຕິດຕາມ ແລະ ປະເມີນຜົນ; ທີມງານປະສານງານຈາກວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາແຂວງ. ໃນໄລຍະ 4 ມື້ຂອງການເຝິກອົບຮົມ, ຜູ້ເຂົ້າຮ່ວມໄດ້ຄົ້ນຫາວິທີການທີ່ພາລະບົດບາດ, ສາມາດສະໜັບສະໜູນນັກຮຽນໃນຂັ້ນທ້ອງຖິ່ນ ພາຍໃຕ້ຮູບແບບ CPD ໃໝ່ຂອງກະຊວງສຶກສາທິການ ແລະ ກິລາ ສປປ ລາວ ໄດ້ທໍາຄວາມເຂົ້າໃຈກ່ຽວກັບທັກສະທີ່ຈໍາເປັນສໍາລັບການໃຫ້ຄໍາປຶກສາ ທີ່ມີປະສິດທິພາບຂອງຜູ້ເຮັດວຽກສຶກສານິເທດພາຍໃນ. ໃນກອງປະຊຸມມີຫຼາກຫຼາຍກິດຈະກໍາເຊັ່ນ: ການສະແດງບົດບາດສົມມຸດ, ການຈໍາລອງ ແລະ ການນໍາສະເໜີແບບໂຕ້ຕອບ, ປະຕິບັດທັກສະການໃຫ້ຄໍາແນະນໍາທີ່ໄດ້ຮັບໃນລະຫວ່າງການເຝິກອົບຮົມ ແລະ ວິທີທີ່ນໍາໃຊ້ໃນການເຮັດວຽກກັບທີມງານ. ໃນຕອນທ້າຍຂອງແຕ່ລະມື້, ຜູ້ເຂົ້າຮ່ວມໄດ້ສະທ້ອນໃຫ້ເຫັນເຖິງຄວາມສາມາດຂອງຕົນເອງ ແລະ ຄວາມກ່ຽວຂ້ອງຂອງບົດຮຽນເພື່ອໃຫ້ການສະໜັບສະໜູນເພື່ອນຮ່ວມງານຂອງຕົນ.

ທ່ານ ເກດ ພັນລັກ ໄດ້ກ່າວສະຫຼຸບວ່າ: "ຄູມີບົດບາດສໍາຄັນໃນການຮຽນຮູ້ ຂອງນັກຮຽນໃຫ້ປະສົບຜົນສໍາເລັດ. ເປົ້າໝາຍຂອງລະບົບ CPD ໃໝ່ທີ່ເນັ້ນໃສ່ຂັ້ນໂຮງຮຽນ ເພື່ອເຮັດໃຫ້ຄູສອນຢູ່ໃນເຂດບໍລິການຂອງວິທະຍາໄລຄູໄດ້ຮັບການສະໜັບສະໜູນ ແລະ ໝັ້ນໃຈກັບການສອນຫຼັກສູດໃໝ່ ເຮັດໃຫ້ຄູຮູ້ສຶກມີແຮງຈູງໃຈທີ່ຈະສືບຕໍ່ປັບປຸງທັກສະການສິດສອນຂອງຄູ ເພື່ອໃຫ້ນັກຮຽນໄດ້ຮຽນຮູ້ ແລະ ເຂົ້າໃຈບົດຮຽນໄດ້ດີຂຶ້ນ".



| 2023-11-06 | Newspaper | Vientiane Mai | Page 2 |
|---|---|---|---|

ສຶກສາ

# ພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນວິທະຍາໄລຄູເປົ້າໝາຍ



● ເພື່ອເປັນການສືບຕໍ່ພັດທະນາ ຄູ-ອາຈານ ໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນ ວິທະຍາໄລ ຄູເປົ້າໝາຍ ເມື່ອບໍ່ດົນຜ່ານມາ ກະຊວງສຶກສາທິການ ແລະ ກິລາ (ສສກ) ຈັດກອງປະຊຸມສ້າງຂີດຄວາມສາມາດ ໃຫ້ແກ່ ທີມງານວິຊາການ 3 ວິທະຍາໄລ (ວຄ) ຄູເປົ້າໝາຍ ທາງດ້ານທັກສະໃນການໃຫ້ຄຳປຶກສາ ຂັ້ນພື້ນຖານ ທີ່ວິທະຍາໄລຄູຄັງໄຊ ແຂວງຊຽງຂວາງ ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ ແຂວງຫຼວງນ້ຳທາ.

ການຝຶກອົບຮົມແມ່ນສ່ວນໜຶ່ງຂອງກິດຈະກຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບທີມງານວິຊາການໃນ 3 ວິທະຍາໄລຄູເປົ້າໝາຍ ທີ່ຈັດໂດຍກົມການສ້າງຄູ ກະຊວງ ສສກ ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານສະຫະລັດອາເມລິກາ ແລະ ອົງການ USAID ໂດຍຜ່ານແຜນງານບີລວາ ເຊິ່ງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໄດ້ສ້າງຕັ້ງຂຶ້ນ ໂດຍການສະໜັບສະໜູນຜ່ານແຜນງານບີລວາ ເພື່ອຮັບປະກັນການສະໜັບສະໜູນວຽກງານ CPD ຢູ່ໃນໂຮງຮຽນ ແລະ ເໝາະສົມກັບຄວາມຕ້ອງການຂອງຄູໃນ 7 ແຂວງເປົ້າໝາຍ (ແຂວງຫຼວງນ້ຳທາ ຜົ້ງສາລີ ບໍ່ແກ້ວ ຊຽງຂວາງ ຫົວພັນ ສະຫວັນນະເຂດ ແລະ ແຂວງຄຳມ່ວນ) ລະບົບ CPD ໃນຂັ້ນໂຮງຮຽນນີ້ ວິທະຍາໄລຄູຈະເຮັດວຽກຢ່າງໃກ້ຊິດກັບພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະໜັບສະໜູນຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ຄູສອນໃນໂຮງຮຽນ ທີມງານຜູ້ເຮັດວຽກສຶກສານິເທດພາຍໃນ 1.000 ກວ່າຄົນໃນ 30 ເມືອງເປົ້າໝາຍ ໄດ້ເຂົ້າຮ່ວມການຝຶກອົບຮົມຈຳນວນໜຶ່ງ ເພື່ອກະກຽມໃຫ້ເຂົາເຈົ້າມີຄວາມພ້ອມເຕັມພາລະບົດບາດໃນການຊ່ວຍເຫຼືອຄູ ເຊິ່ງຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ເລີ່ມໃຫ້ການສະໜັບສະໜູນຄູໃນຕອນເລີ່ມຕົ້ນຂອງສົກຮຽນໃໝ່ ໂດຍມີເປົ້າໝາຍໃນການປັບປຸງຄຸນນະພາບການສອນໃນໂຮງຮຽນຂັ້ນປະຖົມ ພາລະບົດບາດຂອງ 3 ວິທະຍາໄລຄູເປົ້າໝາຍ (ສະຫວັນນະເຂດ ຄັງໄຊ ແລະ ຫຼວງນ້ຳທາ) ແມ່ນການພັດທະນາຄວາມສາມາດດ້ານວິຊາການຂອງທີມຜູ້ເຮັດວຽກສຶກສານິເທດພາຍໃນ ວິທະຍາໄລຄູ ຈະກາຍເປັນສູນກາງທີ່ດີທີ່ສຸດສຳລັບການພັດທະນາວິຊາຊີບຄູ ສຳລັບນັກສຶກສາຄູ (ຜູ້ທີ່ຈະເປັນຄູໃນອະນາຄົດ ທີ່ກຳລັງໄດ້ຮັບການຝຶກອົບຮົມ) ແລະ ຄູສອນໃນໂຮງຮຽນ (ຄູໃນປັດຈຸບັນ) ເປົ້າໝາຍສູງສຸດແມ່ນເພື່ອໃຫ້ສາມາດມີສ່ວນຮ່ວມກັບນັກຮຽນຂອງເຂົາເຈົ້າໃນການຮຽນຮູ້ ເພື່ອໃຫ້ບັນລຸຜົນການຮຽນທີ່ດີຂຶ້ນ.

ທ່ານ ເກດ ພັນລັກ ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: ວິທະຍາໄລຄູ ຈະນຳພາການເສີມສ້າງຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອຊ່ວຍເຫຼືອຄູຂັ້ນປະຖົມສຶກສາໃຫ້ມີຄຸນນະພາບສູງ ລັດຖະບານສະຫະລັດ ແລະ ອົງການ USAID ໂດຍຜ່ານແຜນງານບີລວາ ໄດ້ສະໜັບສະໜູນການຈັດຝຶກອົບຮົມທີ່ຕ້ອງການ ໂດຍທີມງານວິຊາການຈາກວິທະຍາໄລຄູ ເພື່ອປະຕິບັດພາລະບົດບາດທີ່ສຳຄັນນີ້.

ການຝຶກອົບຮົມໃນປັດຈຸບັນ ໄດ້ຖືກອອກແບບເພື່ອໃຫ້ທີມງານດ້ານວິຊາການຂອງວິທະຍາໄລຄູເປົ້າໝາຍ ເຂົ້າໃຈໃນບົດບາດຂອງເຂົາເຈົ້າທີ່ເປັນພີ່ລ້ຽງ ຜູ້ເຮັດວຽກສຶກສານິເທດພາຍໃນ ເຊິ່ງໄດ້ກະກຽມຄວາມພ້ອມໃຫ້ເຂົາເຈົ້າໃນການຊ່ວຍເຫຼືອແບບເຊິ່ງໜ້າ ແລະ ການຊ່ວຍເຫຼືອແບບທາງໄກ ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ການຝຶກອົບຮົມແມ່ນຝຶກໃຫ້ໂດຍທີມຜູ້ຊ່ຽວຊານວຽກງານຝຶກອົບຮົມຄູຂອງແຜນງານບີລວາ.

ທ່ານ ອາຈານ ບົວສອນ ແສງມະນີ ທີມງານວິຊາການຂອງວິທະຍາໄລຄູຫຼວງນ້ຳທາ ໄດ້ກ່າວວ່າ: ການຝຶກອົບຮົມຄັ້ງນີ້ ມີຄວາມສຳຄັນ ແລະ ເປັນປະໂຫຍດຫຼາຍສຳລັບທີມງານວິຊາການຂອງວິທະຍາໄລຄູ ຄວາມຮູ້ ແລະ ຄວາມເຂົ້າໃຈທີ່ພວກເຮົາໄດ້ຮັບຄັ້ງນີ້ ແມ່ນເປັນປະໂຫຍດສຳລັບພະນັກງານ ເພື່ອໃຫ້ການຊ່ວຍເຫຼືອດ້ານເຕັກນິກວິຊາການ ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ຈະໃຫ້ການຊ່ວຍເຫຼືອຄູເພື່ອປັບປຸງການສອນນັກຮຽນຂອງພວກເຂົາ ໂດຍນຳໃຊ້ຫຼັກສູດສະບັບປັບປຸງໃໝ່ ການຝຶກອົບຮົມຍັງເປັນປະໂຫຍດສຳລັບທີມງານວິຊາການສຳລັບການເຮັດວຽກປະຈຳວັນຂອງພວກເຮົາ ທີ່ວິທະຍາໄລຄູ ແລະ ການພັດທະນາວິຊາຊີບຂອງຕົນເອງ ບົດຮຽນທີ່ໄດ້ຮັບຈາກການຝຶກອົບຮົມຄັ້ງນີ້ ໄດ້ຊ່ວຍໃຫ້ເຂົາເຈົ້າສາມາດສະທ້ອນເບິ່ງວຽກງານຂອງຕົນເອງໃນການປັບປຸງໃນອະນາຄົດ ໃນນາມທີ່ເປັນຄູຂອງນັກສຶກສາຄູ ແລະ ໃຫ້ການຝຶກອົບຮົມແກ່ຄູສອນໃນໂຮງຮຽນ.

ການຝຶກອົບຮົມແຕ່ລະຄັ້ງມີຜູ້ເຂົ້າຮ່ວມຢ່າງໜ້ອຍ 50 ຄົນ ປະກອບມີ ທີມງານວິຊາການຈາກວິທະຍາໄລຄູ ຜູ້ຕາງໜ້າກົມການສ້າງຄູ ທີມງານທີ່ປຶກສາ ແລະ ປະເມີນຜົນ ທີມງານປະສານງານຈາກວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ໃນໄລຍະຂອງການຝຶກອົບຮົມ ຜູ້ເຂົ້າຮ່ວມໄດ້ຄົ້ນຫາວິທີການ ພາລະບົດບາດຂອງເຂົາເຈົ້າ ສາມາດສະໜັບສະໜູນນັກຮຽນໃນຂັ້ນທ້ອງຖິ່ນພາຍໃຕ້ລະບົບ CPD ໃໝ່ຂອງກະຊວງສຶກສາທິການ ແລະ ກິລາ ສປປ ລາວ ພວກເຂົາເຈົ້າໄດ້ທຳຄວາມເຂົ້າໃຈຮ່ວມກັນກັບທັກສະທີ່ຈຳເປັນສຳລັບການໃຫ້ຄຳປຶກສາທີ່ມີປະສິດທິພາບຂອງຜູ້ເຮັດວຽກສຶກສານິເທດພາຍໃນ.

ທ່ານ ເກດ ພັນລັກ ໄດ້ກ່າວເນັ້ນຕື່ມວ່າ: ຄູມີບົດບາດສຳຄັນໃນການຮຽນຮູ້ຂອງນັກຮຽນໃຫ້ປະສົບຜົນສຳເລັດ ເປົ້າໝາຍຂອງລະບົບ CPD ໃໝ່ທີ່ເນັ້ນໃສ່ຂັ້ນໂຮງຮຽນ ແມ່ນເພື່ອເຮັດໃຫ້ຄູສອນຢູ່ໃນເຂດບໍລິການຂອງວິທະຍາໄລຄູ ໄດ້ຮັບການສະໜັບສະໜູນ ແລະ ໝັ້ນໃຈກັບການສອນຫຼັກສູດໃໝ່ ເຊິ່ງໃຫ້ພວກເຂົາຮູ້ສຶກມີແຮງຈູງໃຈທີ່ຈະສືບຕໍ່ປັບປຸງທັກສະການສິດສອນຂອງເຂົາເຈົ້າ ເພື່ອໃຫ້ນັກຮຽນຂອງພວກເຂົາໄດ້ຮຽນຮູ້ດີຂຶ້ນ.

ບົດສະເໜີໂດຍ: ແວ່ນລາວ

| 2023-10-27 | Pathet Lao Facebook |
|---|---|

ປະເທດລາວ Pathedlao
October 27 ·

ສ້າງຂີດຄວາມສາມາດ ດ້ານທັກສະ
ການໃຫ້ຄຳປຶກສາ ແກ່ພະນັກງານຄູ

ຂປລ. ເມື່ອບໍ່ດົນມານີ້, ພະນັກງານວິຊາການຄູ ຫລາຍກວ່າ 150 ຄົນ ທີ່ມາຈາກວິທະຍາໄລຄູຫລວງນໍ້າທາ, ວິທະຍາໄລຄູຄັງໄຂ ແລະ ວິທະຍາໄລຄູສະຫວັນນະເຂດ ຝຶກອົບຮົມກ່ຽວກັບທັກສະ ການໃຫ້ຄຳປຶກສາ ຜູ້ຊີ້ນຳ ແລະ ຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອພັດທະນາຂີດຄວາມສາມາດ ກ່ຽວກັບການພັດທະນາວິຊາຊີບຄູ ຢູ່ໂຮງຮຽນແບບຕໍ່ເນື່ອງໃນວິທະຍາໄລຄູເປົ້າໝາຍ ແລະ ແທດເໝາະກັບຄວາມຕ້ອງການຂອງຄູ ໃນ 7 ແຂວງເປົ້າໝາຍ (ຫລວງນໍ້າທາ, ຜົ້ງສາລີ, ບໍ່ແກ້ວ, ຊຽງຂວາງ, ຫົວ ພັນ, ສະຫວັນນະເຂດ ແລະ ຄຳມ່ວນ) ໂດຍໄດ້ຮັບການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ ແລະ ອົງການ ພັດທະນາສາກົນຂອງສະຫະລັດອາເມລິກາ ຫລື USAID ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານໃນ ສປປ ລາວ ຫລື ແຜນງານ ບີຄວາ.
ທ່ານ ເກດ ພັນລັກ ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: ວິທະຍາໄລຄູຈະນຳພາ ການເສີມສ້າງຂີດຄວາມສາມາດ ຂອງຜູ້ເຮັດວຽກສຶກສານິເທດພາຍໃນ ເພື່ອຊ່ວຍເຫລືອຄູຊັ້ນປະຖົມສຶກສາ ໃຫ້ມີຄຸນນະພາບສູງ, ວິທະຍາໄລຄູຈະກາຍເປັນຮູບການທີ່ດີທີ່ສຸດ ສຳລັບການພັດທະນາວິຊາຊີບຄູ, ນັກສຶກສາຄູ (ຜູ້ທີ່ຈະເປັນຄູ ໃນອະນາຄົດທີ່ກຳລັງໄດ້ຮັບການຝຶກອົບຮົມ) ແລະ ຄູສອນໃນໂຮງຮຽນ (ຄູໃນປັດຈຸ ບັນ). ເປົ້າໝາຍສູງສຸດ ເພື່ອໃຫ້ຄູສາມາດມີສ່ວນຮ່ວມ ກັບນັກຮຽນຂອງເຂົາເຈົ້າໃນການຮຽນຮູ້ ເພື່ອໃຫ້ບັນລຸຜົນການຮຽນທີ່ດີຂຶ້ນ.
ການຝຶກອົບຮົມໃນຄັ້ງນີ້, ຜູ້ເຂົ້າຮ່ວມ ໄດ້ຮ່ວມເຮັດຫລາກຫລາຍກິດຈະກຳ ເປັນຕົ້ນ ການສະ ແດງບົດບາດສົມມຸດ, ການຈຳລອງ ແລະ ການນຳສະເໜີແບບໂຕ້ຕອບ. ພ້ອມນີ້, ໄດ້ປະຕິບັດທັກສະ ການໃຫ້ຄຳແນະນຳ ແລະ ວິທີ ທີ່ຈະນຳໃຊ້ໃນການເຮັດວຽກກັບທີມງານ ຜູ້ເຮັດວຽກສຶກສານິເທດ ໃນການຊ່ວຍເຫລືອແບບເຊິ່ງໜ້າ ແລະ ການຊ່ວຍເຫລືອແບບທາງໄກ ແກ່ຜູ້ເຮັດວຽກສຶກສານິເທດ ໃນການຊ່ວຍເຫລືອຄູ ເພື່ອປັບປຸງຄຸນນະພາບການສອນ ໃນໂຮງຮຽນຊັ້ນປະຖົມ.
ທ່ານ ບົວສອນ ແສງມະນີ ທີມງານວິຊາການຂອງວິທະຍາໄລຄູ ຫລວງນໍ້າທາ ໄດ້ກ່າວວ່າ: ການຝຶກອົບຮົມຄັ້ງນີ້, ມີຄວາມສຳຄັນ ແລະ ເປັນປະໂຫຍດຫລາຍ ສຳລັບທີມງານວິຊາການ ຂອງວິທະຍາ ໄລຄູ, ເຊິ່ງຄວາມຮູ້ ແລະ ຄວາມເຂົ້າໃຈທີ່ພວກເຮົາໄດ້ຮັບຄັ້ງນີ້ ແມ່ນມີປະໂຫຍດຫລາຍ ສຳລັບພະ ນັກງານ ເພື່ອໃຫ້ການຊ່ວຍເຫລືອດ້ານເຕັກນິກວິຊາການ ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ຈະໃຫ້ ການຊ່ວຍເຫລືອຄູ ເພື່ອປັບປຸງການສອນຂອງຄູ ໂດຍນຳໃຊ້ຫລັກສູດສະບັບປັບປຸງໃໝ່. ນອກຈາກນີ້, ການຝຶກອົບຮົມຍັງເປັນປະໂຫຍດ ໃຫ້ທີມງານວິຊາການ ສຳລັບການເຮັດວຽກປະຈຳວັນຂອງຄູ ແລະ ການພັດທະນາວິຊາຊີບຂອງຕົນເອງ ຢູ່ວິທະຍາໄລດັ່ງກ່າວ.



| 2023-10-26 | Edu-Sports TV online |
|---|---|

Edu-Sport TV online
October 26 ·

"ພະນັກງານວິຊາການຫຼາຍກວ່າ 150 ຄົນໃນ 3 ວິທະຍາໄລຄູເປົ້າໝາຍໄດ້ຮັບການຝຶກອົບຮົມກ່ຽວກັບທັກສະການໃຫ້ຄຳປຶກສາ"

ເມື່ອບໍ່ດົນຜ່ານມາ, ກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ ທີມງານວິຊາການວິທະຍາໄລຄູ ທາງດ້ານທັກສະໃນການໃຫ້ຄຳປຶກສາ ໄດ້ຈັດຂຶ້ນທີ່ ວິທະຍາໄລຄູຄັງໄຂ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນໍ້າທາ, ເຊິ່ງການຝຶກອົບຮົມແມ່ນສ່ວນໜຶ່ງຂອງກິດຈະກຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງສຳລັບທີມງານວິຊາການໃນ 3 ວິທະຍາໄລຄູເປົ້າໝາຍທີ່ຈັດໂດຍກົມການສ້າງຄູ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕາລີ ແລະ ອົງການ US... See more

See Translation



| | |
|---|---|
| **2023-10-28** | **Edu-Sport Daily News Facebook** |

**ໜັງສືພິມສຶກສາ-ກິລາລາຍວັນ**
4d ·

ສສກ ພັດທະນາຂີດຄວາມສາມາດການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນ ວລ ຄູເປົ້າໝາຍ
------------------------------------------------------------------------

ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຈັດກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ທີມງານວິຊາການ 3 ວິທະຍາໄລ (ວລ) ຄູເປົ້າໝາຍ ທາງດ້ານທັກສະໃນການໃຫ້ຄຳປຶກສາ ຂຶ້ນພ້ອມກັນ ເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນໍ້າທາ.

ການຝຶກອົບຮົມແມ່ນສ່ວນໜຶ່ງຂອງກິດຈະກຳການພັດທະນາວິຊາຊີບຄູແບບ... See more




| | |
|---|---|
| **2023-10-29** | **Economic and Commerce Facebook** |

**ຂ່າວເສດຖະກິດ-ການຄ້າ** Lao Economic Daily
October 29 ·

ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດກອງປະຊຸມວຽກການພັດທະນາຂີດຄວາມສາມາດ ຊຸດໃໝ່ ກ່ຽວກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃຫ້ພະນັກງານວິຊາການຫຼາຍກວ່າ 150 ຄົນ ໃນ 3 ວິທະຍາໄລຄູເປົ້າໝາຍ ໄດ້ຮັບການຝຶກອົບຮົມດ້ານທັກສະການໃຫ້ຄຳປຶກສາ
-----------------------------
ກົດອ່ານລະອຽດທີ່: https://laoedaily.com.la/2023/10/27/127629/
ທ່ານສາມາດຕິດຕາມຂໍ້ມູນ-ຂ່າວສານອື່ນໆໄດ້ອີກທີ່ເວັບໄຊ:
https://www.laoedaily.com.la/... See more



| 2023-10-30 | Vientiane Mai Facebook |
|---|---|

Vientiane Mai
October 30 at 4:57 AM ·

ພັດທະນາຂີດຄວາມສາມາດການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນ ໑໑ ຄູເປົ້າໝາຍ

.................................................................

ກະຊວງສຶກສາທິການ ແລະ ກິລາ (ສສກ) ຈັດກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ທີມງານວິຊາການ 3 ວິທະຍາໄລ (ວຄ) ຄູເປົ້າໝາຍ ທາງດ້ານທັກສະໃນການໃຫ້ຄຳປຶກສາ ຂຶ້ນພ້ອມກັນ ເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ.

#ກົດອ່ານຂໍ້ມູນເພີ່ມຕື່ມ👇

https://v2.vientianemai.net/archives/60103

#VientianeMai

#bm




| 2023-10-30 | Pasaxon Facebook |
|---|---|

ປະຊາຊົນ
October 30 ·

ສສກ ພັດທະນາຂີດຄວາມສາມາດການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

-------------------

ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຈັດກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ທີມງານວິຊາການ 3 ວິທະຍາໄລ (ວຄ) ຄູເປົ້າໝາຍ ທາງດ້ານທັກສະໃນການໃຫ້ຄຳປຶກສາຂຶ້ນພ້ອມກັນ ເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ມີວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ ເຂົ້າຮ່ວມ.

ການຝຶກອົບຮົມແມ່ນສ່ວນໜຶ່ງຂອງກິດຈະກຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບທີມງານວິຊາການໃນ 3 ວິທະຍາໄລຄູເປົ້າໝາຍ ທີ່ຈັດໂດຍກົມການສ້າງຄູ ກະຊວງສຶກສາ... See more





| 2023-10-19 | Tetra Tech International Development Facebook and LinkedIn |
|---|---|






| 2023-10-28 | Edu-Sport Daily News Website |
|---|---|


ສສກ ພັດທະນາຂີດຄວາມສາມາດການພັດທະນາວິຊາຊີບຄູ
ແບບຕໍ່ເນື່ອງ ໃນ ວລ ຄູເປົ້າໝາຍ

27/10/2023

| 2023-10-30 | Vientiane Mai Website |
|---|---|


ພັດທະນາຂີດຄວາມສາມາດການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນ
ວລ ຄູເປົ້າໝາຍ

